ສົ່ງ: ພະແນກກົດໝາຍ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ 477 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 28 NOV 2006

# ຂໍ້ຕົກລົງ

## ວ່າດ້ວຍ ລະບຽບການລາພັກຂອງລັດຖະກອນຢູ່ທະນາຄານແຫ່ງ ສປປ ລາວ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ1999 ;
- ອີງຕາມດຳລັດ ວ່າດ້ວຍລະບຽບລັດຖະກອນແຫ່ງ ສປປ ລາວ ສະບັບເລກທີ 82/ນຍ ລົງວັນທີ 19/05/2003 ແລະບົດແນະນຳ ສະບັບເລກທີ 508/ສນຍ ລົງວັນທີ 10/10/2003 ກ່ຽວກັບການຈັດຕັ້ງປະຕິບັດ ດຳລັດດັ່ງກ່າວ;
- ອີງຕາມການເຫັນດີເປັນເອກະພາບຂອງຄະນະຜູ້ວ່າການ ແລະບັນດາຄະນະກົມກ່ຽວຂ້ອງ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ :

ມາດຕາ 1 : ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອເປັນບ່ອນອີງໃນການປະຕິບັດນະໂຍບາຍຕໍ່ລັດຖະກອນທະນາຄານແຫ່ງ ສປປ ລາວ ທີ່ມີຈຸດປະສົງລາພັກປະຈຳປີ ຫຼື ລາພັກອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍ ລະບຽບລັດຖະກອນແຫ່ງ ສປປ ລາວ ແລະເປັນບ່ອນອີງໃນການຄິດໄລ່ເງິນອຸດໜູນບໍ່ພັກການປະຈຳປີຂອງພວກກ່ຽວ ໃນກໍລະນີບໍ່ລາພັກ ຫຼື ພັກບໍ່ຄົບຕາມຈຳນວນວັນທີ່ມີສິດພັກ ທີ່ໄດ້ກຳນົດໄວ້.

ມາດຕາ 2 : ຂອບເຂດການນຳໃຊ້

ຜູ້ທີ່ມີສິດລາພັກຕາມຂໍ້ຕົກລົງສະບັບນີ້ ມີຄື :

2.1 ລັດຖະກອນສົມບູນ;

2.2 ລັດຖະກອນຝຶກງານ.

ຄານແຫ່ງ ສ.ປ.ປ. ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ ຕູ້ໄປສະນີ 19
ພິມ 4304 BNL VTE LS ໂທລະສານ (856)-21-21 3108 ໂທລະສັບ 213109-213110 E-mail: Bol@pan-laos.net.la

ໂດຍໄດ້ຮັບອະນຸຍາດຈາກການຈັດຕັ້ງທີ່ມີສິດຄຸ້ມຄອງ.

3.2 ປະເພດຂອງການລາພັກ ມີຄື :

1. ພັກປະຈຳປີ;
2. ພັກເກີດລູກ;
3. ພັກປິ່ນປົວສຸຂະພາບ;
4. ພັກລໍຖ້າການສັບຊ້ອນ;
5. ພັກໄປຍົກລະດັບວິຊາສະເພາະ;
6. ພັກໃນກໍລະນີອື່ນໆ.

3.3 ລັດຖະກອນສົມບູນ ມີສິດລາພັກ ດັ່ງນີ້ :

1. ພັກປະຈຳປີ;
2. ພັກເກີດລູກ;
3. ພັກປິ່ນປົວສຸຂະພາບ;
4. ພັກລໍຖ້າການສັບຊ້ອນ;
5. ພັກໄປຍົກລະດັບວິຊາສະເພາະ;
6. ພັກໃນກໍລະນີອື່ນໆ ເຊັ່ນ : ພັກແຕ່ງງານຂອງລັດຖະກອນ; ພັກເບິ່ງແຍງເມຍເກີດລູກ; ພັກເບິ່ງແຍງ ເມຍ ຫຼື ຜົວ, ພໍ່, ແມ່ ແລະລູກຄົງຂອງລັດຖະກອນເວລາເຈັບເປັນ; ພັກໃນເວລາ ເມຍ ຫຼື ຜົວ, ພໍ່, ແມ່ ແລະລູກຄົງຂອງລັດຖະກອນເສຍຊີວິດ; ພັກເມື່ອຢາມບ້ານຂອງລັດຖະກອນ ທີ່ການຈັດຕັ້ງແຕ່ງຕັ້ງໄປປະຈຳການຢູ່ຕ່າງແຂວງ; ພັກຕິດຕາມຜົວ ຫຼື ເມຍ ທີ່ຖືກໄປປະຈຳການ ຫຼື ຄົ້ນຄ້ວາຮ່ຳຮຽນຢູ່ຕ່າງປະເທດ ຕາມການຕົກລົງຂອງການຈັດຕັ້ງ ແຕ່ 1 ປີ ຂຶ້ນໄປ.

3.4 ລັດຖະກອນຝຶກງານ ບໍ່ມີສິດລາພັກໃນກໍລະນີ ລຸ່ມນີ້ : " ຕາມທີ່ໄດ້ກຳນົດໄວ້ໃນບົດແນະນຳ ສະບັບເລກທີ 508/ສນຍ ລົງວັນທີ 10/10/2003 ກ່ຽວກັບການຈັດຕັ້ງປະຕິບັດດຳລັດ ເລກທີ 82/ນຍ ຂໍ້ II ຂໍ້ 8 ກ່ຽວກັບການຝຶກງານ " :

1. ພັກປະຈຳປີ;
2. ພັກລໍຖ້າການສັບຊ້ອນ;
3. ພັກໄປຍົກລະດັບວິຊາສະເພາະທັງໄລຍະສັ້ນ-ໄລຍະຍາວ ຢູ່ພາຍໃນ ແລະຕ່າງປະເທດ;
4. ພັກຕິດຕາມຜົວ ຫຼື ເມຍ ທີ່ຖືກໄປປະຈຳການ ຫຼື ຄົ້ນຄ້ວາຮ່ຳຮຽນຢູ່ຕ່າງປະເທດ ຕາມການຕົກລົງຂອງການຈັດຕັ້ງ ແຕ່ 1 ປີ ຂຶ້ນໄປ.

